# ຂໍ້ແນະນຳການຄັດເລືອກທີມງານຈັດຕັ້ງປະຕິບັດຂັ້ນບ້ານ

1. **ຈຸດປະສົງ:** ເພື່ອຄັດເລືອກເອົາທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ ຈຳນວນ 3 ຄົນ, ໃນນັ້ນຢ່າງໜ້ອຍຕ້ອງແມ່ນຜູ້ຍິງ 1 ຄົນ.

2. **ການກະກຽມອຸປະກອນ:** ໃຫ້ອີງໃສ່ ວ່າຈະນຳໃຊ້ວິທີການຄັດເລືອກແບບໃດ. ຖ້າຈະນຳໃຊ້ວິທີການຄັດເລືອກແບບເປີດເຜີຍ ອຸປະກອນທີ່ຕ້ອງການແມ່ນເຈ້ຍແຜ່ນໃຫຍ່, ບິກເຟີດຂຽນເຈ້ຍ ແລະ ສະກອດຕິດເຈ້ຍ, ແຕ່ຖ້າຈະນຳໃຊ້ວິທີການຄັດເລືອກແບບປິດລັບ ອຸປະກອນທີ່ຕ້ອງການແມ່ນຖ້ວຍ ແລະ ແກ່ນສາລີ ຫລື ກ້ອນຫີນ ຫຼື ແກ່ນຜັກທຽມ.

3. **ໄລຍະເວລາຄັດເລືອກ:** ໃຊ້ເວລາປະມານ 2 ຊົ່ວໂມງ. (ໂດຍການຄັດເລືອກໄປພ້ອມດຽວກັນກັບການສຳຫລວດໂຄງການຍ່ອຍຢູ່ຂັ້ນບ້ານ ຫລື ໃນເວລາດຽວກັນກັບ ທີມງານຂັ້ນເມືອງລົງໄປເຜີຍແຜ່ ແລະ ຝຶກອົບຮົມກົນໄກສະແດງຄຳຄິດຄຳເຫັນຢູ່ແຕ່ລະບ້ານ (ຖ້າຍັງບໍ່ທັນໄດ້ຄັດເລືອກໃນເວລາລົງໄປສຳຫລວດ) ແລະ ທົບທວນທີມງານດັ່ງກ່າວຕື່ມອີກໃນເວລາດຽວກັນກັບການຈັດກອງປະຊຸມຮັບຮອງການອອກແບໂຄງການຍ່ອຍ.

4. <u>ຂັ້ນຕອນໃນການຄັດເລືອກ:</u>

4.1 ເລີ່ມຕົ້ນດ້ວຍການສະເໜີໂຄງຮ່າງການຈັດຕັ້ງ ທລຍ ຂັ້ນບ້ານ. ໂດຍສະເພາະອົງປະກອບ ຂອງທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ ເຊັ່ນ:

- ຜູ້ປະສານງານ ການຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ Village Sub-Projecct Implementation Coordinator(VIC)
- ຜູ້ປະສານງານຈັດຊື້-ຈັດຈ້າງຂັ້ນບ້ານ Village Procurement Coordinator (VPC)
- ຜູ້ປະສານງານການເງິນຂັ້ນບ້ານ Village Finance Coordinator (VFC)

4.2 ອະທິບາຍບົດບາດ ແລະ ໜ້າທີ່ຮັບຜິດຊອບ ໂດຍລວມຂອງທີມງານຈັດຕັ້ງປະຕິບັດໂຄງການ;

- ອະທິບາຍກົດລະບຽບຄືນ ວ່າໃນທີມງານຈັດຕັ້ງປະຕິບັດຂັ້ນບ້ານ 3 ຄົນນັ້ນ, ຢ່າງໜ້ອຍຈະຕ້ອງແມ່ນຜູ້ຍິງ 1 ຄົນ. ໝາຍຄວາມວ່າ: ອາດຈະແມ່ນຜູ້ຍິງ 2 ຄົນ ຫລື ແມ່ນຍິງທັງໝົດກໍໄດ້ (ຫລີກລ້ຽງບັນຫາທີ່ວ່າ ທຸກໆບ້ານເລືອກເອົາພຽງແຕ່ແມ່ຍິງ 1 ຄົນ ແລະ ຜູ້ຊາຍ 2 ຄົນ. ຖ້າເລືອກແບບສະເໜີໄປຄືແນວນີ້ ຖືວ່າບໍ່ຖືກຕ້ອງ ເພາະວ່າຢ່າງໜ້ອຍຢູ່ບ້ານໃດນຶ່ງພາຍໃນເມືອງ ຕ້ອງມີຜູ້ຍິງຫລາຍກວ່າ 1 ຄົນ ທີ່ມີຄວາມສາມາດ).

4.3 ຖາມຜູ້ເຂົ້າຮ່ວມປະຊຸມວ່າ ທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານຂອງພວກເຮົາຄວນມີຄຸນສົມບັດແນວໃດແດ່ ຈຶ່ງຈະປະຕິບັດໜ້າທີ່ໄດ້ດີ? ຈາກນັ້ນຂຽນລາຍການຄຸນສົມບັດທີ່ຕ້ອງການ ຕາມການສະເໜີຂອງຜູ້ເຂົ້າຮ່ວມໃສ່ເຈ້ຍແຜ່ນໃຫຍ່ ຫລື ກະດານດໍາ.

**ໝາຍເຫດ:** ເງື່ອນໄຂທີ່ຕ້ອງການ ສໍາລັບການຄັດເລືອກທີມງານຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານ ອາດຈະແມ່ນ:

- ເປັນຄົນຊື່ສັດ;
- ເປັນຄົນທີ່ມີຄວາມເຄົາລົບນັບຖື ຈາກພໍ່ແມ່ປະຊາຊົນພາຍໃນບ້ານ;
- ເປັນຜູ້ທີ່ກ້າເວົ້າ ກ້າວ່າຢູ່ຕໍ່ໜ້າມະຫາຊົນ;
- ຢ່າງໜ້ອຍຜູ້ນຶ່ງຕ້ອງເອົາຜູ້ທີ່ສາມາດອ່ານອອກຂຽນໄດ້ 1 ຄົນ
- ຢ່າງໜ້ອຍຕ້ອງແມ່ນຜູ້ຍິງ 1 ຄົນ.
- ຖ້າຫາກ ວ່າບ້ານ ມີຫລາຍຊົນເຜົ່າ ຢ່າງໜ້ອຍຕ້ອງເລືອກເອົາ 1 ຄົນ ມາຈາກຊົນເຜົ່າ.
- ບໍ່ຄວນເລືອກເອົານາຍບ້ານ ເພາະວ່າເພິ່ນມີໜ້າວຽກຮັບຜິດຊອບຫລາຍຢູ່ແລ້ວ, ສະນັ້ນ ເພິ່ນອາດຈະບໍ່ມີເວລາໄປເຮັດວຽກນີ້ຢ່າງເຕັມເມັດເຕັມໜ່ວຍ ເພາະວຽກດັ່ງກ່າວນີ້ເປັນວຽກ ທີ່ຈະຕ້ອງໄດ້ດໍາເນີນຢ່າງຕໍ່ເນື່ອງ ແລະ ນໍາໃຊ້ເວລາຫລາຍ.
- ອາດຈະເລືອກເອົາ ມາຈາກຕົວແທນບ້ານ 6 ຄົນ ທີ່ໄດ້ຄັດເລືອກໄວ້ແລ້ວນັ້ນກໍໄດ້;

4.4 ຕໍ່ໄປ ສະເໜີຊື່ຜູ້ທີ່ຈະເຂົ້າຄັດເລືອກ. ໂດຍອາດນໍາໃຊ້ 2 ວິທີ:

- ອາສາສະໝັກ ດ້ວຍຕົນເອງ; ຫລື
- ຜູ້ເຂົ້າຮ່ວມກອງປະຊຸມ ສະເໜີຊື່ຜູ້ທີ່ເຫັນວ່າມີຄວາມເໝາະສົມ ຕາມເງື່ອນໄຂທີ່ກ່າວມາຂ້າງເທິງ. ຈາກນັ້ນ ຜູ້ອໍານວຍຄວາມສະດວກຂຽນຊື່ລົງໃສ່ເຈ້ຍແຜ່ນໃຫຍ່;
- ຢ່າງໜ້ອຍຕ້ອງໃຫ້ຜູ້ສະໝັກຫລາຍກວ່າຈໍານວນທີ່ຕ້ອງການ ຫລື ຢ່າງໜ້ອຍໃຫ້ໄດ້ ຊາຍ 3 ແລະ ຍິງ 3 ຄົນ;

4.5 ຜູ້ອໍານວຍຄວາມສະດວກ ອ່ານຊື່ຂອງຜູ້ສະເໜີເພື່ອຄັດເລືອກທັງໝົດ, ຕໍ່ມາຖາມຜູ້ໝັກ/ຜູ້ຖືກ ສະເໜີແຕ່ລະຄົນວ່າເຂົາເຈົ້າຍິນດີ ທີ່ຈະເປັນທີມງານດັ່ງກ່າວຂອງບ້ານຫຼື ບໍ? ຖ້າໄດ້ຖືກຄັດ ເລືອກ,

4.6 ຜູ້ສະໝັກແຕ່ລະຄົນ ກ່າວສະແດງຄໍາເຫັນສັ້ນໆ ເພື່ອອະທິບາຍ ວ່າເປັນຫຍັງເຂົາເຈົ້າຈຶ່ງສະໝັກ ແລະ ຈະປະຕິບັດໜ້າທີ່ຄືແນວໃດ? ຖ້າໄດ້ຖືກຄັດເລືອກ.

4.7 ການຄັດເລືອກ. ຖາມທີ່ປະຊຸມ ວ່າຈະເຮັດການຄັດເລືອກວິທີໃດ? ລະຫວ່າງການຄັດເລືອກແບບ ເປີດເຜີຍ ແລະ ການຄັດເລືອກແບບປິດລັບ.

- **ການ<u>ຄັດເລືອກແບບເປີດເຜີຍ</u>**: (ແມ່ນການຍົກມືເອົາ)_ອ່ານຊື່ຜູ້ສະໝັກດ້ວຍສຽງດັງໆ ເພື່ອໃຫ້ຜູ້ ເຂົ້າຮ່ວມຍົກມືເອົາ ຈາກນັ້ນນັບຈໍານວນຜູ້ທີ່ຍົກມື ແລ້ວບັນທຶກໄວ້.

  **ໝາຍເຫດ**:

  - ຜູ້ນຶ່ງ ສາມາດຍົກມືໄດ້ພຽງແຕ່ເທື່ອດຽວ
  - ເລີ່ມຈາກຜູ້ສະໝັກ ທີ່ເປັນຜູ້ຍິງກ່ອນ , ຈາກນັ້ນຈຶ່ງຍົກມືໃຫ້ແກ່ຜູ້ສະໝັກຜູ້ຊາຍ;
  - ພາຍຫລັງທີ່ນັບແລ້ວ ໃຫ້ຂຽນຈໍານວນຄະແນນ ລົງໃສ່ເຈັ້ຽແຜ່ນໃຫ່ຍ;

- ຜູ້ໄດ້ຄະແນນຫລາຍກວ່າໝູ່ ຜູ້ນັ້ນຈະເປັນກາຍເປັນທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ຢ່າລືມວ່າຢ່າງໜ້ອຍ ຕ້ອງໃຫ້ມີຜູ້ຍິງ 1 ຄົນ ໝາຍຄວາມວ່າອາດຈະແມ່ນຜູ້ຍິງ 2 ຄົນ ຫຼື ແມ່ນຜູ້ຍິງໝົດກໍໄດ້)
- ຖ້າຫາກວ່າບ້ານ ມີຫລາຍຊົນເຜົ່າ ຢ່າງໜ້ອຍຕ້ອງເລືອກເອົາ 1 ຄົນ ມາຈາກຊົນເຜົ່າ.

**ການຄັດເລືອກແບບປິດລັບ**: ວິທີການດັ່ງກ່າວນີ້ ຜູ້ສະໝັກຈະບໍ່ຮູ້ວ່າ ໃຜເປັນຜູ້ຄັດເລືອກເອົາ. ວິທີການ:

- ໃຫ້ຜູ້ສະໝັກໄປນັ່ງລຽນກັນ ໂດຍປິ່ນຫລັງໃສ່ຜູ້ເຂົ້າຮ່ວມ;
- ວາງຖ້ວຍ ຫຼື ກະຕ່າ ໃສ່ຊື່ງກັບຜູ້ສະໝັກແຕ່ລະຄົນ (ແຕ່ຕ້ອງມີຝາປິດໄວ້ຄັກແນ່)
- ຜູ້ເຂົ້າຮ່ວມແຕ່ລະຄົນ ນັບເອົາກ້ອນຫີນ ຫຼື ແກ່ນສາລີ ຫຼື ຫົວຜັກທຽມ ຈຳນວນ 3 ກ້ອນ ເພື່ອປ່ອນໃສ່ຖ້ວຍ ຫຼື ກະຕ່າ ທີ່ຢາຍໄວ້ນັ້ນ;
- ນັບຈຳນວນແກ່ນ ທີ່ຜູ້ເຂົ້າຮ່ວມປ່ອນໃຫ້ແຕ່ລະຄົນ ແລະ ປະກາດໃຫ້ທີ່ປະຊຸມຮູ້ວ່າ ໃຜເປັນຜູ້ຖືກຄັດເລືອກ. ແຕ່ຢ່າລືມວ່າຢ່າງໜ້ອຍ ຕ້ອງໃຫ້ມີຜູ້ຍິງ 1 ຄົນ ໝາຍຄວາມ ວ່າອາດຈະແມ່ນຜູ້ຍິງ 2 ຄົນ ຫຼື ແມ່ນຜູ້ຍິງໝົດກໍໄດ້ ແລະ ຢ່າລືມວ່າ ຖ້າຫາກວ່າບ້ານ ມີຫລາຍຊົນເຜົ່າ ຢ່າງໜ້ອຍຕ້ອງເລືອກເອົາ 1 ຄົນ ມາຈາກຊົນເຜົ່າ.

4.8 ເມື່ອການເລືອກຕັ້ງສຳເລັດແລ້ວ. ຖ້າຫາກວ່າມີຜູ້ອ່ານອອກຂຽນໄດ້ ພຽງຜູ້ດຽວ ຜູ້ນັ້ນຄວນ ເລືອກໃຫ້ເປັນຜູ້ປະສານງານ ການຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນບ້ານເພາະວ່າຜູ້ກ່ຽວຈະ ກາຍເປັນ ຫົວໜ້າທີມງານຈັດຕັ້ງປະຕິບັດຂັ້ນບ້ານເລີຍ;

5. ຮ່າງຂໍ້ຕົກລົງ ການຮັບຮອງເອົາທີມງານຈັດຕັ້ງປະຕິບັດຂັ້ນບ້ານ ໂດຍການເຊັນຢັ້ງຢືນ ແລະ ປະ ທັບກາໂດຍນາຍບ້ານ;
6. ສຸດທ້າຍ ຢ່າລືມແນະນຳໃຫ້ຜູ້ເຂົ້າຮ່ວມ ຊາບວ່າພວກເຮົາຈະໄດ້ ເຂົ້າຮ່ວມກອງປະຊຸມຮັບຮອງ ການ ອອກແບບໂຄງການຍ່ອຍຂັ້ນບ້ານ ທີ່ຈະຈັດຂຶ້ນຫລັງຈາກການອອກແບບໂຄງການສຳເລັດ.